# ສັນຍາການຄ້າ

## ລະຫວ່າງ

## ລັດຖະບານແຫ່ງລາຊະອານາຈັກກຳປູເຈຍ

## ແລະ

## ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ລັດຖະບານ ລາຊະອານາຈັກກຳປູເຈັງ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ດ້ວຍຄວາມມຸ້ງຫວັງຢາກເສີມຂະຫຍາຍການພົວພັນການຄ້າ ລະຫວ່າງສອງປະເທດ ແລະ ຮັດແໜ້ນສາຍພົວພັນມິດຕະພາບລະຫວ່າງລັດຖະບານ ແລະ ປະຊາຊົນຂອງສອງປະເທດ ບົນຫຼັກການຄວາມສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ, ໄດ້ຕົກລົງກັນດັ່ງຕໍ່ໄປນີ້ :

### <u>ມາດຕາ 1</u>

ສອງລັດຖະບານ ຈະເຮັດທຸກຄວາມສາມາດ ເພື່ອເສີມຂະຫຍາຍການພົວພັນທາງດ້ານການຄ້າ ລະຫວ່າງສອງປະເທດ, ລັດຖະບານ ແຕ່ລະຝ່າຍຈະຕ້ອງໄດ້ສຶກສາບັນດາຂໍ້ສະເໜີ ຊຶ່ງລັດຖະບານອີກຝ່າຍນຶ່ງ ສະເໜີຂຶ້ນມາເພື່ອພິຈາລະນາ ແລະ ຍຶດຖືຂໍ້ຕົກລົງທີ່ສອງລັດຖະບານ ເຫັນດີນຳກັນ ເພື່ອເຮັດໃຫ້ການພົວພັນ ດ້ານເສດຖະກິດ ແລະ ການຄ້າ ລະຫວ່າງສອງປະເທດ ແໜ້ນແຟ້ນຂຶ້ນ.

### <u>ມາດຕາ 2</u>

ສອງລັດຖະບານ ຈະອຳນວຍຄວາມສະດວກໃນການນຳສິນຄ້າເຂົ້າ ແລະ ອອກໃຫ້ແກ່ກັນ ແລະ ໃນກໍລະນີທີ່ຕ້ອງໃຊ້ໃບອະນຸຍາດນຳເຂົ້າ ຫລື ໃບອະນຸຍາດສົ່ງອອກທັງສອງຝ່າຍຈະໃຫ້ຄວາມສະດວກແກ່ກັນບົນພື້ນຖານລະບຽບຫຼັກການ, ຂໍ້ກຳນົດ ແລະ ກົດໝາຍທີ່ມີຜົນບັງຄັບໃຊ້ຂອງແຕ່ລະປະເທດ ແລະ ຫຼັກການສາກົນ.

### <u>ມາດຕາ 3</u>

ສອງລັດຖະບານ ຈະປະຕິບັດຮ່ວມກັນ ບົນຫຼັກການ ວ່າດ້ວຍປະເທດທີ່ໄດ້ຮັບການອະນຸເຄາະຫລາຍກວ່າໝູ່ ທາງດ້ານພາສີ, ຄ່າທຳນຽມ ແລະ ລະບຽບຫຼັກການດ້ານພາສີ ກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າຈາກປະເທດນຶ່ງໄປຍັງອີກປະເທດນຶ່ງ. ຢ່າງໃດກໍດີຂໍ້ກຳນົດສະບັບນີ້ ຈະບໍ່ຖືກ

ປະຕິບັດຕໍ່ຜົນປະໂຫຍດ, ການຍົກເວັ້ນ ຫລື ສິດພິເສດທີ່ສອງລັດຖະບານໄດ້ໃຫ້ ຫລື ຈະໃຫ້ແກ່ປະເທດ ທີ່ເຂົ້າຮ່ວມກັບອີກຝ່າຍນຶ່ງຂອງຄູ່ສັນຍາ ໃນສະຫະພັນພາສີ ຫລື ເຂດການຄ້າເສລີ ຫລື ຢູ່ໃນຂອບຄ່າຍອົງການຈັດຕັ້ງເພື່ອການຮ່ວມມືທາງດ້ານເສດຖະກິດທີ່ມີຢູ່ແລ້ວ ຫລື ອາດຈະຖືກສ້າງຕັ້ງຂຶ້ນໃນອານາຄົດ.

<u>ມາດຕາ 4</u>

ລັດຖະບານແຕ່ລະຝ່າຍ ຈະປະຕິບັດ ຫຼັກການວ່າດ້ວຍປະເທດ ທີ່ໄດ້ຮັບອະນຸເຄາະຫລາຍກວ່າໝູ່ໃຫ້ແກ່ກຳປັ່ນບັນທຸກສິນຄ້າ ຂອງອີກຝ່າຍນຶ່ງເໝືອນດັ່ງທີ່ຕົນໃຫ້ແກ່ປະເທດທີ່ສາມ ໃນເວລາເຂົ້າຈອດພັກເຊົາ ທີ່ທ່າເຮືອສາກົນຂອງຕົນໂດຍສອດຄ່ອງກັບກົດຫມາຍ, ຂໍ້ກຳນົດ ແລະ ລະບຽບການ.

<u>ມາດຕາ 5</u>

ທຸກການຊຳລະສະສາງ ທີ່ພົວພັນກັບການຊື້-ຂາຍ ສິນຄ້າລະຫວ່າງສອງປະເທດຈະປະຕິບັດດ້ວຍເງິນຕາຕະກຸນແຂງທີ່ສາມາດ ແລກປ່ຽນໄດ້ຢ່າງເສລີ ຊຶ່ງລັດຖະບານທັງສອງປະເທດສາມາດຮັບຮອງເອົາໄດ້ໂດຍສອດຄ່ອງກັບກົດຫມາຍ ແລະ ຂໍ້ກຳນົດວ່າດ້ວຍການແລກປ່ຽນເງິນຕາທີ່ມີຜົນບັງຄັບໃຊ້ໃນແຕ່ລະປະເທດ.

<u>ມາດຕາ 6</u>

ໃນກໍລະນີທີ່ມີຄວາມຈຳເປັນ ລັດຖະບານທັງສອງຝ່າຍຈະໄດ້ປຶກສານຳກັນ ເພື່ອວາງມາດຕະການຕ່າງໆ ເພື່ອເສີມຂະຫຍາຍເສດຖະກິດ ແລະ ການພົວພັນທາງດ້ານການຄ້າ ຫລື ແກ້ໄຂບັນຫາຕ່າງໆ ທີ່ອາດເກີດຂຶ້ນ ໃນເວລາປະຕິບັດຂໍ້ກຳນົດ ຂອງສັນຍາສະບັບນີ້.

<u>ມາດຕາ 7</u>

ພາຍຫລັງທີ່ສັນຍາສະບັບນີ້ ຫມົດກຳນົດ, ຂໍ້ກຳນົດຂອງສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ໄດ້ອີກຕໍ່ໄປ ກັບບັນດາຂໍ້ຜູກພັນທີ່ໄດ້ເຊັນກັນ ໃນຂອບຂ່າຍຂອງສັນຍາສະບັບນີ້ ແຕ່ບໍ່ທັນໄດ້ປະຕິບັດສຳເລັດເທື່ອໃນມື້ ທີ່ສັນຍາສະບັບນີ້ໝົດກຳນົດ.

## ມາດຕາ 8

ລັດຖະບານແຕ່ລະຝ່າຍຈະຍົກເວັ້ນພາສີ ຫລື ຄ່າທຳນຽມໃຫ້ແກ່ສິນຄ້າທີ່ມີແຫລ່ງກຳເນີດຈາກອີກປະເທດຫນຶ່ງ ໃຫ້ແກ່ອີກປະເທດຫນຶ່ງ ໂດຍສອດຄ່ອງກັບກົດຫມາຍ ແລະ ລະບຽບຫຼັກການທີ່ມີຜົນບັງຄັບໃຊ້ :

ກ . ສິນຄ້າທີ່ນຳມາໃຊ້ຊົ່ວຄາວໃນຊ່ວງໄລຍະງານຕະລາດນັດ ແລະ ງານວາງສະແດງ ຊຶ່ງຈະໄດ້ນຳເອົາກັບຄືນປະເທດຖິ່ນກຳເນີດ ໂດຍສອດຄ່ອງ ກັບ ກົດຫມາຍ ແລະ ລະບຽບ ຫຼັກການຂອງ ແຕ່ລະປະເທດ

ຂ. ສິນຄ້າຕົວຢ່າງ ທີ່ນຳມາແຈກຢາຍເພື່ອເປັນຕົວຢ່າງ ແລະ ບໍ່ແມ່ນເພື່ອຂາຍ.

## ມາດຕາ 9

ຂໍ້ກຳນົດຂອງສັນຍາສະບັບນີ້ ຈະບໍ່ຈຳກັດສິດລັດຖະບານ ຂອງອີກປະເທດນຶ່ງໃນການຮັບຮອງ ຫລືການວາງມາດຕະການ ເພື່ອປົກປ້ອງຜົນປະໂຫຍດອັນສຳຄັນດ້ານຄວາມສະຫງົບ ຫລື ປົກປ້ອງດ້ານສາທາລະນະສຸກ ຫລື ດ້ານສະພາບແວດລ້ອມ, ການກັນພະຍາດ ແລະ ໂລກລະບາດຂອງສັດ ຫລືພືດພັນ.

## ມາດຕາ 10

ສັນຍາສະບັບນີ້ ອາດຖືກປັບປຸງ ຫລື ດັດແກ້ ຫລື ຢຸດເຊົາໂດຍການເຫັນດີເຫັນພ້ອມນຳກັນດ້ວຍລາຍລັກອັກສອນຂອງສອງລັດຖະບານ. ທຸກການປັບປຸງ, ດັດແກ້ ຫລື ຢຸດເຊົາຂອງສັນຍາສະບັບນີ້ຈະບໍ່ນຳຄວາມເສຍຫາຍ ຕໍ່ສິດ ຫຼື ພັນທະ ທີ່ມີຂຶ້ນພາຍໃຕ້ສັນຍາກ່ອນການປັບປຸງ, ດັດແກ້ ຫລື ຢຸດເຊົາສັນຍາຈະມີຜົນບັງຄັບໃຊ້ໄດ້.

## ມາດຕາ 11

ສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຈະມີຜົນສັກສິດພາຍໃນກຳນົດ 1 ປີ ແລະ ສາມາດຕໍ່ອາຍຸໄປໄດ້ 1 ປີ ໂດຍອັດຕະໂນມັດໃນແຕ່ລະເທື່ອ, ເວັ້ນເສັຍແຕ່ລັດຖະບານຂອງປະເທດໃດນຶ່ງ ສະແດງເຈດຈະນາເປັນລາຍລັກອັກສອນ ຢາກຢຸດເຊົາ ສັນຍາສະບັບນີ້ 3 ເດືອນກ່ອນຫນ້າສັນຍາຈະຫມົດອາຍຸ. ເພື່ອເປັນຫຼັກຖານຢັ້ງຢືນ, ຜູ້ໄດ້ຮັບມອບຫມາຍອຳນາດຈາກລັດຖະບານຂອງຕົນ ໄດ້ລົງນາມໃນສັນຍາສະບັບນີ້.

ເຮັດທີ່ວຽງຈັນ, ວັນທີ່  25 ພຶດສະພາ (5) ປີ 1998. ເປັນສອງສະບັບຕົ້ນເປັນ ພາສາລາວ,ພາສາຂະແມ ແລະ ອັງກິດ, ທຸກໆສະບັບມີຄຸນຄ່າເທົ່າທຽມກັນ, ໃນກໍລະນີມີການຕີຄວາມໝາຍແຕກຕ່າງ ສະບັບພາສາອັງກິດ ຈະເປັນບ່ອນອີງ.

ລັດຖະບານລາຊະອານາຈັກ
ກຳປູເຈັຽ

ຈຳ ປຣາສິດ
ລັດຖະມົນຕີກະຊວງການຄ້າ

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ

ພູມີ ທິບພະວອນ
ລັດຖະມົນຕີກະຊວງການຄ້າແລະທ່ອງທ່ຽວ